# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 5 ສິງຫາ 2007 (8-5-2007)

---

## ໃນເມື່ອມີຄວາມຮັບຜິດຊອບຢ່າງຫລວງຫລາຍ

**ຂໍ້ພຣະຄັມພີໃນບົດຮຽນ:** 1 ກະສັດ 3:1-15

**ຄຳຖາມຊີວິດ:** ວິທີໃດຂ້າພະເຈົ້າຈະຈັດການກັບຄວາມຮັບຜິດຊອບ?

**ພຣະຄັມພີແຫ່ງຄວາມຈິງ:** ພຣະເຈົ້າມີຄວາມພໍພຣະທັຍກັບໄພ່ພົນຂອງພຣະອົງທີ່ຈະປະທານປັນຍາໃຫ້ພວກເຂົາໃນເມື່ອມີຄວາມປະສົງທີ່ຈະຮັບຜິດຊອບກັບພາຣະກິດທີ່ພຣະອົງມອບໃຫ້.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ຊ່ອຍທ່ານໃຫ້ຊອກຫາຄວາມຊ່ວຍເຫລືອຈາກພຣະເຈົ້າໃນເມື່ອປະເຊີນກັບການຮັບຜິດຊອບຢ່າງຫລວງຫລາຍ.

- ໃຫ້ເຂົ້າໃຈວ່າພຣະເຈົ້າຈະປະທານປັນຍາໃຫ້ທ່ານເພື່ອຈະເຣັດພຣະປະສົງສຳເຣັດ.
- ຊອກສແວງຫາພຣະປັນຍາເພື່ອຈັດການກັບພາຣະກິດຕ່າງໆ.

ທ່ານບິວ ມີຄວາມຍິນດີ ແລະອຶດອັດໃຈເວລາດຽວກັນເພາະຫົວໜ້າໂຮງງານໄດ້ຂຶ້ນຊັ້ນໃຫ້ລາວເປັນຜູ້ອຳນວຍການໃຫ້ຫ້ອງການ. ລາວຮູ້ຄຸນຄ່າທີ່ໄດ້ຂຶ້ນຊັ້ນ, ຂຶ້ນເງິນເດືອນໃນຕຳແໜ່ງໃໝ່. ແລະລາວຄຶດວ່າຄົນງານອື່ນໆຈະຍອມຮັບລາວ. ລາວບໍ່ແນ່ໃຈເລີຍວ່າຄົນອື່ນ ອາຍຸຫລຸ້ນດຽວກັນຈະຟັງການນຳພາຂອງລາວຫລືບໍ່. ທ່ານອາດຈະຈຳໄດ້ ກະສັດໂຊໂລໂມນ ກາຍເປັນກະສັດເວລາຍັງເປັນຊາຍໜຸ່ມ. ດັ່ງນັ້ນ, ທ່ານບິວ ກໍເລີຍອັດປະຕູຫ້ອງການ ແລະຄຸກເຂົ່າລົງອະທິຖານຂໍສະຕິປັນຍາຈາກພຣະເຈົ້າ.

ການເປັນຜູ້ໃຫຍ່ຍ່ອມມີໜ້າທີ່ຮັບຜິດຊອບ. ການຮັບຜິດຊອບນັ້ນແຕກຕ່າງກັນ, ຮັບຜິດຊອບ ໃນການເປັນພໍ່ແມ່, ໃນດ້ານເງິນທອງ, ແລະການທ້າທາຍຕ່າງໆໃນຊີວິດ. ໃນເມື່ອມີຄວາມຮັບຜິດຊອບຄູນທະວີຂຶ້ນ ສິ່ງນັ້ນອາດກາຍເປັນພາຣະໜັກເຣັດໃຫ້ມີຄວາມກະວົນກະວາຍ, ນອນບໍ່ໄດ້, ກາຍເປັນພະຍາດກະເພາະເກີດຂຶ້ນ. ແຕ່ມີຂ່າວດີຢູ່ວ່າ ພຣະເຈົ້າປະທານສະຕິປັນຍາແກ່ຄົນຂອງພຣະອົງຜູ້ຕ້ອງການຄວາມຊ່ວຍເຫລືອ ເພື່ອຈະຈັດການກັບ ຄວາມຮັບຜິດຊອບທີ່ພຣະເຈົ້າມອບໃຫ້ນັ້ນ.

## ສຶກສາພຣະຄັມພີ

### 1. ຫັນເຂົ້າຫາພຣະເຈົ້າ (1 ກະສັດ 3:1-4)

ໃນເມື່ອພວກເຮົາຕ້ອງການການນຳພາຈາກພຣະເຈົ້າເພື່ອຈະຕໍ່ສູ້ກັບບັນຫາໃນຊີວິດ ພວກເຮົາສາມາດຫັນເຂົ້າຫາພຣະເຈົ້າ. ປະວັດຂອງກະສັດ ໂຊໂລໂມນ ຜູ້ເປັນກະສັດຂອງອິສຣາເອນໄດ້ສອນພວກເຮົາເປັນຫລັກການຫລາຍໆ ຢ່າງທີ່ຈະຕັດສິນໃຈ ແລະການຮັບຜິດຊອບຕ່າງໆ. ເຣື່ອງນີ້ໄດ້ເວົ້າຢູ່ໃນສອງບົດ (1 ກະສັດ 3-4) ໄດ້ບອກເຖິງການຄອງຣາຊບັນລັງແຕ່ຫົວທີຂອງກະສັດໂຊໂລໂມນຊຶ່ງປະກອບດ້ວຍການຕັດສິນໃຈທີ່ເພິ່ນໄດ້ຫັນຫາພຣະເຈົ້າ.

ກະສັດໂຊໂລໂມນ ສະແດງເຖິງຄວາມເຊື່ອ ໂດຍການ**ຍ່າງໄປໃນສະພາບຂອງພໍ່ຕົນ ຄືກະສັດ ດາວິດ** ຊຶ່ງກ່ອນຕາຍຜູ້ເປັນພໍ່ໄດ້ສອນລູກໃຫ້ເຊື່ອຟັງພຣະເຈົ້າ ( 1 ກະສັດ 2:3). ແຕ່ຢ່າງໃດກໍຕາມ ກະສັດໂຊໂລໂມນ **ຮັກອົງພຣະຜູ້**

**ເປັນເຈົ້າແທ້** ແຕ່ການຕັດສິນໃຈທີ່ວທີ່ນັ້ນເປັນການອຽງໄປທາງຝ່າຍໂລກ-ທີ່ຄົນສມັຍໃໝ່ໃນເວລານີ້ໄດ້ປະເຊີນ. ກະສັດໂຊໂລໂມນ ໄດ້ ອຽງໄປທາງຝ່າຍໂລກໃນສາມວິທີທາງ:

1. ການປົກຄອງທາງການເມືອງ

໒. ຄວາມມັກສ່ວນຕົວ

3. ຫລັກການທາງສາສນາ

ຕົວຢ່າງອັນນຶ່ງທີ່ ກະສັດໂຊໂລໂມນ ອຽງໄປທາງຝ່າຍໂລກຄື ເພິ່ນໄດ້**ຜູກພັນທະໄມຕຣີ**ກັບກະສັດທີ່ບໍ່ນັບຖືພຣະເຈົ້າ, **ກະສັດ ຟາໂຣ ຈາກ ອີຢິບ**. ຕາມທຳນຽມຂອງຄົນໃນສມັຍນັ້ນ ເພິ່ນໄດ້ແຕ່ງງານກັບ**ລູກສາວ ກະສັດ ຟາໂຣ** ເພື່ອຜູກພັນທາງການເມືອງ. ທັມມະດາແລ້ວ ກະສັດໂຊໂລໂມນ ຄວນຈະເດີນໄປຕາມຫົນທາງຂອງພຣະເຈົ້າ, ບໍ່ແມ່ນເຮັດຕາມໂລກ. ຕາມປົກກະຕິແລ້ວ ໃນເມື່ອຄົນເຮົາໄດ້ເຮັດຕາມທຳນຽມຂອງມະນຸດແລ້ວ ກໍເຫັນວ່າເປັນການກົງກັນຂ້າມກັບພຣະຄຳຂອງພຣະເຈົ້າ.

ໃນເວລາແຕ່ງງານຢູ່ນັ້ນ ກະສັດໂຊໂລໂມນ **ຍັງບໍ່ໄດ້ສ້າງຕຶກອັນຍິ່ງໃຫຍ່ນັ້ນແລ້ວ ຊຶ່ງເປັນພຣະຣາຊວັງ ແລະພຣະວິຫານຂອງພຣະເຈົ້າ.** ໂຄງການທີ່ສ້າງ**ກຳແພງອ້ອມເມືອງເຢຣູຊາເລັມ**ໃຊ້ເວລາຫລາຍປີ. ກະສັດໂຊໂລໂມນ ໄດ້ນຳເອົາມະເຫສີໃໝ່ມາຢູ່ໃນ**ເມືອງ ດາວິດ** ຈົນເຖິງສ້າງພຣະຣາຊວັງແລ້ວ. ການຊັກຈູງຂອງນາງຕໍ່ຊີວິດ ກະສັດໂຊໂລໂມນ ໄດ້ປາກົດແຈ້ງຂຶ້ນ. ( ເພິ່ນໄດ້ມີເມັຽ 1000 ຄົນ) ຄວາມມັກສ່ວນຕົວເປັນເຫດໃຫ້ເພິ່ນຕົກຕ່ຳເສັຽຊື່ສຽງ ຄືຍອມໄຫວ້ພຣະທຽມໄປຕາມທີ່ເມັຽໄດ້ແນະນຳ.

ພຣະວິຫານທີ່ເມືອງ ເຢຣູຊາເລັມຍັງບໍ່ທັນສ້າງຂຶ້ນເທື່ອນັ້ນ ມີຫລາຍໆຄົນໄດ້ຖວາຍເຄື່ອງບູຊາໃນບ່ອນສູງ. ຕາມບ່ອນສູງໆ ຄົນໄດ້ຖວາຍບູຊາສັດ ຕໍ່ພຣະຂອງພວກການາອານ. ມັກປາດໃນພຣະຄັມພີໄດ້ກ່າວວ່າ ກະສັດໂຊໂລໂມນ ຮັກພຣະເຈົ້າ ແຕ່ໃນຄວາມຈິງແລ້ວເພິ່ນໄດ້ຖວາຍບູຊາທູບທຽນໃນບ່ອນສູງໆ. (11:1-8). ໃນພຣະຄັມພີເດີມໄດ້ສອນວ່າ ບ່ອນສູງເຫລົ່ານີ້ບໍ່ເປັນການດີຫຍັງເລີຍ. ພຣະເຈົ້າຊົງສັ່ງໃຫ້ພວກອິສຣາເອນທຳລາຍບ່ອນສູງຕ່າງໆທີ່ພວກການາອາດໄດ້ໃຊ້ເພື່ອພວກອິສຣາເອນຈະບໍ່ຖືກທົດລອງໃຫ້ນະມັສການພຣະຂອງພວກການາອານ. (ຈົດບັດຊີ 33:51-5໒). ກະສັດໂຊໂລໂມນ ເໝືອນກັນກັບຜູ້ເປັນພໍ່ ໄດ້ເດີນທາງໄປເມືອງ **ກິບີໂອນ** ຊຶ່ງໄກປະມານ 7 ໄມ ຢູ່ທາງເໜືອຂອງກຸງເຢຣູຊາເລັມ ຊຶ່ງເປັນ**ບ່ອນສູງທີ່ມີຊື່ສຽງ** ເພື່ອຖວາຍເຄື່ອງບູຊາ ເພາະພຣະວິຫານຍັງບໍ່ໄດ້ສ້າງຂຶ້ນເທື່ອ. ການຖວາຍບູຊາອັນໃຫຍ່ຫລວງ**1000 ຄັ້ງນີ້** ໄດ້ສະແດງວ່າເພິ່ນຕ້ອງການຄວາມຊ່ວຍເຫລືອເພາະມີໜ້າທີ່ຮັບຜິດຊອບອັນໃຫຍ່ ຫລືອາດເປັນການຂອບພຣະຄຸນອັນແທ້ຈິງຂອງເພິ່ນຫລືບໍ່?

ກ້າວທີ່ນຶ່ງໃນການຈັດການກັບຄວາມຮັບຜິດຊອບນັ້ນຄືຕ້ອງຫັນຫາພຣະເຈົ້າ. ພວກເຮົາບໍ່ຄວນລໍຖ້າເຮັດຄວາມຜິດກ່ອນຈົນໄດ້ຮັບຜົນຕອບຈາກຄວາມບາບຈຶ່ງຕັດສິນໃຈເຂົ້າຫາພຣະເຈົ້າ. ກ່ອນເລີ້ມຕົ້ນເຮັດອັນໃດອັນນຶ່ງ ຄົນທີ່ເຊື່ອຕ້ອງສແວງຫາການນຳພາ ແລະການໝູນໃຈຈາກພຣະເຈົ້າເພື່ອຈະໄດ້ປັນຍາອັນດີເລີດ.

## ໒. <u>ຈົດຈໍ່ຕໍ່ສິ່ງສຳຄັນ</u> (1 ກະສັດ 3:5-9)

ຖ້າທ່ານມີຄຳທູນຂໍອັນດຽວທີ່ພຣະເຈົ້າຈະຕອບ ທ່ານຄິດວ່າທ່ານຈະທູນຂໍອັນໃດ? ກະສັດໂຊໂລໂມນ ຢູ່ໃນສະພາບນັ້ນເວລາເດີນທາງໄປເມືອງ ກິບີໂອນ. ໃນເມື່ອພຣະເຈົ້າໄດ້ຖາມເພິ່ນວ່າຕ້ອງການຫຍັງ ເພິ່ນຕອບດ້ວຍຄວາມໝັ້ນໃຈຕາມລັກສະນະຂອງພຣະເຈົ້າ. ເພິ່ນຍອມຮັບວ່າພຣະເຈົ້າໄດ້ສະແດງຄວາມຮັກ ແລະຄວາມສັດຊື່ອັນໃຫຍ່ຕໍ່ບິດາຂອງຕົນ. ການທີ່ກະສັດດາວິດໄດ້ຮັບພຣະພອນອັນຍິ່ງໃຫຍ່ໃນເມື່ອເພິ່ນໄດ້ຍ່າງໄປກັບພຣະເຈົ້າ **ດ້ວຍຄວາມສັດຊື່, ດ້ວຍຄວາມທ່ຽງທັມ, ແລະດ້ວຍການດີ.** ກະສັດໂຊໂລໂມນ ຮູ້ດີວ່າການທີ່ຕົນເອງໄດ້ເປັນຢູ່ຢ່າງນີ້ກໍຍ້ອນຄວາມຮັກອັນສັດຊື່ຂອງພຣະເຈົ້າຕໍ່ກະສັດດາວິດ ແລະໄດ້ຂຶ້ນຣາຊບັນລັງເປັນກະສັດແທນບ່ອນຂອງບິດານີ້ເປັນແຜນການຂອງພຣະເຈົ້າ.

ກະສັດໂຊໂລໂມນຮູ້ວ່າຕົນເອງຍັງເປັນວັຍລຸ້ນ ຂາດປະສົບການ. ເພິ່ນບໍ່ໄດ້ເຂົ້າໄປຫາພຣະເຈົ້າດ້ວຍການອວດໂຕ. ແຕ່ເພິ່ນຮູ້ວ່າໜ້າທີ່ຮັບຜິດຊອບນັ້ນມີຫລາຍເຫລືອລົ້ນທີ່ຈະປົກຄອງອານາຈັກຂອງຕົນ. ການທີ່ຖ່ອມໃຈລົງວ່າ

ເຮົາຕ້ອງການຄວາມຊ່ວຍເຫລືອເຮັດໃຫ້ເຮົາຈົດຈໍ່ຕໍ່ສິ່ງສຳຄັນໃນຊີວິດໄດ້.

ຄວາມຈິງສາມຢ່າງ-ຄວາມສັດຊື່ອັນຍິ່ງໃຫຍ່ຂອງພຣະເຈົ້າ, ການຮຽກເອີ້ນຂອງພຣະເຈົ້າ, ແລະຄົນທີ່ພຣະເຈົ້າໄດ້ເລືອກໄວ້ ແລະການທີ່ເພິ່ນໄດ້**ຂາດປະສົບການ**ນັ້ນ ໄດ້ຊ່ອຍໃຫ້ກະສັດໂຊໂລໂມນຮູ້ຈັກຄວາມຕ້ອງການອັນແທ້ຈິງ. ເພິ່ນໄດ້ທູນຂໍຈາກພຣະເຈົ້າໃຫ້ມີ**ຫົວໃຈເຊື່ອຟັງ**. ເພິ່ນຮູ້ວ່າຂໍກະແຈຂອງປັນຍານັ້ນຄືການເຊື່ອຟັງ. ເພິ່ນຍັງຮູ້ອີກວ່າການເຊື່ອຟັງທີ່ແທ້ຈິງນັ້ນບໍ່ເປັນພຽງແຕ່ໃຫ້ສລາດ ແຕ່ມີຫົວໃຈເຕັມໄປດ້ວຍຄວາມຮັກ. ເປົ້າໝາຍຂອງກະສັດໂຊໂລໂມນບໍ່ແມ່ນຢາກມີຊື່ສຽງດີ, ສລາດ, ແຕ່ຕ້ອງການເປັນຜູ້ **ຕັດສິນ** ຫລືປົກຄອງທີ່ດີ. ຄົນຂອງພຣະເຈົ້າຕ້ອງມີຄວາມສາມາດ**ມອງເຫັນອັນດີ ແລະອັນໃດຊົ່ວຮ້າຍໄດ້.**

ໃນເມື່ອພວກເຮົາຊອກສແຫວງຫາການນຳພາຂອງພຣະເຈົ້າ ແລະພຣະປັນຍາຂອງພຣະອົງ, ພວກເຮົາບໍ່ຄວນຈົດຈໍ່ໃສ່ຕົວເອງ ແຕ່ຕ້ອງຈົດຈໍ່ຕໍ່ແຜນການຂອງພຣະເຈົ້າໃນຊີວິດຂອງເຮົາ. ຈຳໄວ້ວ່າກະສັດໂຊໂລໂມນ ໄດ້ຍອມຮັບວ່າຄົນອິສຣາເອນເປັນໄພ່ພົນຂອງພຣະເຈົ້າ. ໃນເມື່ອເຮົາຖືວ່າສິ່ງຂອງທີ່ເຮົາມີຫລືຕຳແໜ່ງຂອງຕົນເອງສຳຄັນ ນັ້ນແຫລະເປັນການເລີ້ມຕົ້ນເຂົ້າໄປເປັນຄົນເຫັນແກ່ຕົວ ແລະຕົກຢູ່ໃນຄວາມບາບ. ການຖ່ອມຕົວຮັບຮູ້ວ່າສິ່ງທີ່ຕົນມີເປັນຂອງອົງພຣະຜູ້ເປັນເຈົ້າ ການຍອມຮັບເຊັ່ນນີ້ສາມາດເຮັດໃຫ້ເຮົາອາສັຍພຣະພອນຂອງພຣະເຈົ້າໃນຊີວິດ.

ຄວາມຮັບຜິດຊອບຢ່າງນີ້ອາສັຍຄວາມສາມາດມອງເຫັນອານາຄົດ ແລະພຣະປັນຍາຈາກພຣະເຈົ້າ. ບໍ່ວ່າເຮົາຈະນຳພາຄອບຄົວ, ຮັບໃຊ້, ຕ້ອງເພິ່ງພຣະເຈົ້າ. ເຊື່ອວ່າພຣະເຈົ້າຈະປະທານກຳລັງ ແລະຄວາມສາມາດໃຫ້ ເພື່ອພວກເຮົາຈະໄດ້ເຮັດໃຫ້ແຜນການຂອງພຣະອົງສຳເຣັດໃນຊີວິດຂອງເຮົາ.

## 3. <u>ຍ່າງໄປຕາມທາງຂອງພຣະເຈົ້າ</u> (1 ກະສັດ 3:10-15)

ພຣະເຈົ້າ**ພໍພຣະທັຍ** ແລະພຣະອົງໄດ້ຕອບຄວາມຕ້ອງການຂອງກະສັດໂຊໂລໂມນ. ພຣະເຈົ້າຮູ້ວ່າກະສັດໂຊໂລໂມນບໍ່ໄດ້ທູນຂໍແບບເຫັນແກ່ຕົວ ໃຫ້ມີຊີ**ວິດຍາວນານ** ຫລື**ຮັ່ງມີ** ຫລື**ຂໍໃຫ້ສັດຕຣູຕາຍ**. ຜູ້ທີ່ມີຈິດໃຈຮັກພຣະເຈົ້າຕ້ອງການເຮັດໃຫ້ພຣະອົງຊອບພຣະທັຍແທນທີ່ຈະເຮັດຕາມໃຈຕົນເອງ. ພຣະເຈົ້າຊອບພຣະທັຍໃນເມື່ອຄວາມຕ້ອງການຂອງເຮົາເປັນໄປຕາມພຣະປະສົງຂອງພຣະອົງ.

ພຣະເຈົ້າຕອບສນອງກະສັດໂຊໂລໂມນ ໂດຍປະທານຄວາມສລາດແລະຫົວໃຈທີ່ເຂົ້າໃຈທີ່ບໍ່ມີຜູ້ໃດເທົ່າທຽມໄດ້**ກ່ອນ**ຫລືພາຍຫລັງ. ພຣະເຈົ້າໄດ້ປະທານລື່ນຄວາມຕ້ອງການຂອງກະສັດໂຊໂລໂມນ ຄືປະທານໃຫ້ມີຄວາມ**ຮັ່ງມີ**ແລະກຽດຕິຍົດ ຫລາຍກວ່າມະນຸສໂລກໃນຣາຊອານາຈັກ ໂດຍບໍ່ມີຜູ້ໃດ**ເທົ່າທຽມ**ເລີຍໃນຊີວິດຂອງເພິ່ນ.

ພວກເຮົາຄວນເປັນຄົນລະມັດລະວັງ. ພຣະເຈົ້າໄດ້ອວຍພຣະພອນໃນເມື່ອເຮົາໄດ້ອ້ອນວອນໂດຍຄວາມຖ່ອມໃຈແລະຢ່າງບໍ່ເຫັນແກ່ຕົວ. ແຕ່ແນວໃດກໍຕາມ ຖ້າເຮົາຄິດວ່າໂດຍການອ້ອນວອນຕາມຫລັກສູດແລ້ວ ເຮົາຈະໄດ້ຮັບເງິນຄຳຫລືຊື່ສຽງ, ພວກເຮົາອາດຈະໄດ້ຮັບຄວາມຜິດຫວັງ. ແຕ່ຖ້າວ່າເຮົາເອົາພຣະເຈົ້າກ່ອນ ພຣະອົງກໍຈະປະທານສິ່ງທີ່ເຮົາຕ້ອງປະສົງຕາມນ້ຳພຣະທັມຂອງພຣະອົງ. (ມັດທາຍ 6:31-33).

ພຣະພອນຂອງພຣະເຈົ້າບາງຄັ້ງຂໍມີເງື່ອນໄຂ. ຖ້າກະສັດໂຊໂລໂມນຕ້ອງການມີຄວາມຍິນດີໃນພຣະເຈົ້າຢ່າງຄົບຖ້ວນ ເພິ່ນຕ້ອງຍ່າງໄປ**ຕາມທາງຂອງພຣະເຈົ້າ** ແລະ**ຮັກສາພຣະດຳຣັດ**ຂອງພຣະອົງ ເໝືອນດັ່ງກະສັດເດວິດຜູ້ເປັນບິດາ. ພຣະເຈົ້າຮັກພວກເຮົາຢ່າງພຽງພໍ ທີ່ບໍ່ໄດ້ປະທານພຣະພອນຈົນບໍ່ມີຂອບເຂດໂດຍປາສຈາກຄວາມຮັກ ແລະການເຊື່ອຟັງຂອງພວກເຮົາ.

ໃນເມື່ອກະສັດໂຊໂລໂມນໄດ້**ຕື່ນຈາກນອນ** ເພິ່ນບໍ່ໄດ້ປະລະປະສົບການກັບພຣະເຈົ້າໃນຄວາມຝັນ ແຕ່ໄດ້ຕິດຕາມຄວາມຝັນຈາກສວັນ. ກະສັດໂຊໂລໂມນໄດ້ກັບຄືນໄປກຸງເຢຣູຊາເລັມ ແລະຢືນຢູ່ຕໍ່ໜ້າຫີບພຣະສັນຍາ. ທີ່ນັ້ນເປັນບ່ອນທີ່ພຣະເຈົ້າຊົງສະຖິດຢູ່. ກະສັດໂຊໂລໂມນໄດ້ຖວາຍເຄື່ອງເຜົາບູຊາແລະການຖວາຍສາມັກຄີທັມ. ເຄື່ອງຖວາຍບູຊາເປັນການຖວາຍສິ່ງທັງໝົດຕໍ່ພຣະເຈົ້າຊຶ່ງປະກອບກັບການຖວາຍເພື່ອຄວາມຜິດບາບສ່ວນຕົວ. ຖວາຍ ສາມັກຄີທັມ ຫລືສັນຕິສຸກໝາຍເຖິງການຄືນດີກັບພຣະເຈົ້າ ລະຫວ່າງຜູ້ນະມັສການແລະອົງພຣະຜູ້ເປັນເຈົ້າ. ກະສັດໂຊໂລໂມນ

ຍອມສາລະພາບຄວາມຜິດບາບຂອງຕົນເອງ ແລະຍອມຖວາຍຕົວເອງເພື່ອຈະຍ່າງໄປກັບພຣະເຈົ້າໂດຍ ການເຊື່ອຟັງຢ່າງສັດຊື່ຕລອດຊີວິດ.

**ບົດຮຽນຊີວິດ**

ປະສົບການຂອງ ກະສັດໂຊໂລໂມນເປັນຫລັກການສຳຄັນໃນຊີວິດ ຜູ້ທີ່ເຊື່ອຄວນເອົາເປັນຕົວຢ່າງ. ຄຣິສຕຽນຄວນຈະເຮັດແນວໃດໃນເມື່ອພົບກັບການຮັບຜິດຊອບສຳຄັນ?

- ກ່ອນອື່ນໝົດ ພວກເຮົາຕ້ອງຫັນເຂົ້າຫາພຣະເຈົ້າ ແລະບໍ່ເພິ່ງຕົນເອງ.
- ພວກກເຮົາຕ້ອງຈົດຈໍ່ກັບສິ່ງສຳຄັນຂອງພຣະເຈົ້າ ແທນທີ່ກັບສິ່ງສຳຄັນໃນຕົວເຮົາ.
- ພວກເຮົາຕ້ອງສະແດງເຖິງຄວາມຮັກ ແລະຄວາມເຊື່ອ ໂດຍການຍ່າງໃນຫົນທາງຂອງພຣະເຈົ້າ ແທນທີ່ຈະມີຊີວິດຢູ່ ຕາມຄວາມພໍໃຈຂອງຕົນເອງ.

ພຣະເຈົ້າປະທານໂອກາດໃຫ້ພວກເຮົາຮັບໃຊ້ພຣະອົງຕໍ່ການຮັກສາຄວາມຮັບຜິດຊອບໃນບ້ານເຮືອນ, ໃນບ່ອນເຮັດວຽກ, ໃນໝູ່ບ້ານ, ແລະໃນປະເທດຊາດຂອງເຮົາ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org., by BV.